

# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I.** ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ....................................01 - 04

**II.** ການເຄື່ອນໄຫວຂອງການນຳການຂັ້ນສູງຂອງພັກ ປະຊາຊົນ ປະຕິວັດລາວ.................................05

**III.** ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ................................................06 - 10


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ເດືອນ ກໍລະກົດ 2025


ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

**Tel : 030 9876030, Email: Ri.dept.la@Gmail.com, Website: www.cerccp.org.la**

## I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

### 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

**1) ພັກກອມມູນິດຫວຽດນາມ.**

ສະຫາຍ ໂຕ ເລິມ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ເຊັນຂໍ້ຕົກລົງສະບັບເລກທີ 341-QĐ/TW, ລົງວັນທີ 23 ກໍລະກົດ 2025 ວ່າດ້ວຍ ການຈັດແບ່ງຈໍານວນຜູ້ແທນ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIV ຂອງພັກກອມມູນິດຫວຽດນາມປີ 2026 ຈະມີທັງໝົດ 1.588 ສະຫາຍ, ໃນນັ້ນ ມີຜູ້ແທນທີ່ເປັນກໍາມະການຄະນະບໍລິຫານງານສູນກາງພັກ ສະໄໝທີ XIII ຈໍານວນ 165 ສະຫາຍ; ຜູ້ແທນຈໍານວນ 353 ສະຫາຍ ທີ່ໄດ້ຮັບການເລືອກຕັ້ງຢູ່ 11 ອົງຄະນະພັກແຂວງ, ນະຄອນ ທີ່ບໍ່ຖືກສັບຊ້ອນ/ໂຮມ ແລະ ອົງຄະນະພັກທະຫານ, ອົງຄະນະພັກຕໍາຫຼວດຢູ່ສູນກາງ; ຜູ້ແທນທີ່ໄດ້ຮັບການແຕ່ງຕັ້ງ ຈໍານວນ 1.070 ສະຫາຍຢູ່ 23 ອົງຄະນະພັກແຂວງ, ນະຄອນ ທີ່ຖືກສັບຊ້ອນ/ໂຮມ ແລະ ອົງຄະນະພັກບັນດາອົງການຂອງພັກຢູ່ສູນກາງ; ອົງຄະນະພັກລັດຖະບານ; ອົງຄະນະພັກສະພາແຫ່ງຊາດ; ອົງຄະນະພັກແນວໂຮມປະເທດຊາດ, ບັນດາອົງການຈັດຕັ້ງມະຫາຊົນຢູ່ສູນກາງ; ຜູ້ແທນທີ່ສັງກັດຢູ່ບັນດາຄະນະພັກຢູ່ຕ່າງປະເທດ.

ກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກກະຊວງການຕ່າງປະເທດຫວຽດນາມ ຄັ້ງທີ I ໄລຍະ 2025-2030 ໄດ້ໄຂຂຶ້ນຢ່າງເປັນທາງການ ໂດຍການເຂົ້າຮ່ວມ ແລະ ມີຄໍາເຫັນຊີ້ນໍາ ຂອງ ສະຫາຍ ຟ້າມມິງຈິງ, ກໍາມະການກົມການເມືອງ, ເລຂາຄະນະພັກລັດຖະບານ, ນາຍົກລັດຖະມົນຕີ ສສ ຫວຽດນາມ; ສະຫາຍ ບຸຍ ແທງເຊີນ, ກໍາມະການສູນກາງພັກ, ຮອງນາຍົກລັດຖະມົນຕີ, ເລຂາຄະນະພັກ, ລັດຖະມົນຕີກະຊວງການຕ່າງປະເທດ; ມີບັນດາການນໍາກະຊວງ, ອົງການ, ຂະແໜງການຂອງສູນກາງ ຜູ້ແທນຈໍານວນ 300 ສະຫາຍ ທີ່ເປັນຕົວແທນໃຫ້ແກ່ ສະມາຊິກພັກກະຊວງການຕ່າງປະເທດຫວຽດນາມ 12,000 ສະຫາຍ ເຂົ້າຮ່ວມ.

ຄະນະພັກກະຊວງການຕ່າງປະເທດ ໄດ້ເຮັດໜ້າທີ່ໂຮມກັບ ຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ຮັບເອົາບົດບາດ, ໜ້າທີ່ຈໍານວນໜຶ່ງ ຂອງຄະນະກໍາມາທິການຕ່າງປະເທດສະພາແຫ່ງຊາດ; ຈັດຕັ້ງປະຕິບັດການສັບຊ້ອນ, ປັບປຸງກົງຈັກການຈັດຕັ້ງ ໃຫ້ກະທັດຮັດ, ປະຕິບັດໜ້າທີ່ຢ່າງມີປະສິດທິຜົນ; ຖືສໍາຄັນວຽກງານກໍ່ສ້າງພັກເປັນວຽກປາຍແຫຼມ, ຄະນະພັກກະຊວງໄດ້ສຸມໃສ່ການນໍາພາ, ຊີ້ນໍາການຈັດຕັ້ງປະຕິບັດໜ້າທີ່ການເມືອງ, ກໍ່ສ້າງພັກຕິດແໜ້ນກັບກໍ່ສ້າງຂະແໜງການ ແລະ ຍາດໄດ້ຜົນງານສໍາຄັນ.

ກອງປະຊຸມ ໄດ້ປະກາດ ມະຕິຕົກລົງ ຂອງຄະນະພັກຂັ້ນເທິງ ວ່າດ້ວຍການແຕ່ງຕັ້ງ ຄະນະບໍລິຫານງານຄະນະພັກ ກະຊວງການຕ່າງປະເທດ ຊຸດໃໝ່ ໄລຍະ 2025-2030 ໂດຍແມ່ນ ສະຫາຍ ບຸຍ ແທງເຊີນ, ກໍາມະການສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ເປັນ ເລຂາຄະນະພັກ ກະຊວງການຕ່າງປະເທດ; ກອງປະຊຸມ ຍັງໄດ້ເລືອກເອົາ ຜູ້ແທນ ກະຊວງການຕ່າງປະເທດ ເພື່ອເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ 14 ຂອງພັກກອມມູນິດຫວຽດນາມ ທີ່ຈະຈັດຂຶ້ນ ໃນຕົ້ນປີ 2026.

**2) ພັກກອມມູນິດຈີນ.**

ວັນທີ 31 ກໍລະກົດ 2025, ສປ ຈີນ ໄດ້ຈັດພິທີສະເຫຼີມສະຫຼອງວັນສ້າງຕັ້ງກອງທັບປົດປ່ອຍປະຊາຊົນຈີນ (PLA) ຄົບຮອບ 98 ປີ ໂດຍການເປັນປະທານຂອງ ສະຫາຍ ຕົງຈຸນ (Dong Jun), ລັດຖະມົນຕີກະຊວງປ້ອງກັນປະເທດ ຊຶ່ງສະຫາຍ ໄດ້ກ່າວໃນພິທີດັ່ງກ່າວວ່າ ກອງທັບຈີນ ພ້ອມທີ່ຈະບັນລຸເປົ້າໝາຍໃນການລວມຊາດຈີນ ແລະ ຈະພະຍາຍາມຢ່າງເດັດດ່ຽວ ເພື່ອຂັດຂວາງຄວາມພະຍາຍາມແບ່ງແຍກດິນແດນ ຂອງຈີນ ເພື່ອບັນລຸວິໄສທັດກັບກອງທັບ ທັງໄດ້ສະເໜີ ຄວາມຄິດລິເລີ່ມ 03 ປະການຮ່ວມກັບກອງທັບທົ່ວໂລກ: ຈັດການຄວາມສ່ຽງ ແລະ ຄວາມທ້າທາຍ, ສ້າງໂລກໃຫ້ມີສັນຕິພາບທີ່ຍືນຍົງ; ຄວາມໝັ້ນຄົງສາກົນ ແລະ ຄວາມຈະເລີນຮຸ່ງເຮືອງຮ່ວມກັນ; ເປີດກ້ວາງລວມເອົາທຸກຝ່າຍ ແລະ ສິ່ງແວດລ້ອມທີ່ສະອາດ ແລະ ສວຍງາມ. ຂະນະທີ່, ສະຫາຍ ສີ ຈິ້ນຜິງ, ປະທານປະເທດແຫ່ງ ສປ ຈີນ ໄດ້ສົ່ງຄໍາອວຍພອນ ເຖິງ ບຸກຄະລາຄອນໃນກອງທັບປົດປ່ອຍປະຊາຊົນຈີນ ເພື່ອສະແດງຄວາມຊົມເຊີຍຕໍ່ການອຸທິດຕົນ ແລະ ການປະຕິບັດໜ້າທີ່ປົກປ້ອງອະທິປະໄຕ ຂອງຈີນຕະຫຼອດໄລຍະຜ່ານມາ. ນອກນັ້ນ, ສປ ຈີນ ໄດ້ເປີດໂຕທຸງກອງທັບໃໝ່: ກອງທັບບົກ, ກອງທັບເຮືອ, ກອງທັບອາກາດ ແລະ ກອງທັບລູກສອນໄຟລວມເຖິງກອງທັບໄຊ ເບີ, ກອງທັບສະໜັບສະໜູນທາງດ້ານຂໍ້ມູນ ແລະ ກອງທັບສະໜັບສະໜູນດ້ານໂລຈິດສະຕິກ. ບັນດາທຸງດັ່ງກ່າວຈະເປີດນໍາໃຊ້ນັບແຕ່ 01 ສິງຫາ 2025 ເປັນຕົ້ນໄປ.

**3) ພັກກອມມູນິດກູບາ.**

ໃນລະຫວ່າງ ວັນທີ 04-05/07/025 ທີ່ ນະຄອນຫຼວງ ລາຮາວານ ໄດ້ມີກອງປະຊຸມຄົບຄະນະຂອງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ ຄັ້ງທີ 10 ສະໄໝທີ VIII ໂດຍການເປັນປະທານຂອງ ສະຫາຍ ມິເກວ ເດຍສ ຄາເນວ (Miguel Díaz-Canel Bermúdez), ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດ ແຫ່ງ ສ. ກູບາ. ກອງປະຊຸມ ໄດ້ພ້ອມກັນຕີລາຄາສະພາບການຈັດຕັ້ງປະຕິບັດ ແລະ ການຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງພັກ ເປັນຕົ້ນແມ່ນ ການປະເມີນແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 05 ປີ; ການຈັດຕັ້ງປະຕິບັດໂຄງການບຸລິມະສິດ ຂອງລັດຖະບານ; ການເພີ່ມກຳລັງການຜະລິດສະບຽງອາຫານ; ການສ້າງສະຖຽນລະພາບ ຂອງລະບົບໄຟຟ້າແຫ່ງຊາດ; ຕ້ານການກໍ່ອາດຊະຍາກຳ; ການສະກັດກັ້ນ-ແກ້ໄຂ ບັນດາແຫຼ່ງຂ່າວທີ່ບິດເບືອນ-ໃສ່ຮ້າຍປ້າຍສີ ຕໍ່ກັບ ພັກ-ລັດຖະບານ ຕະຫຼອດຮອດການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະ ຄວາມກົດດັນຈາກພາຍນອກ ກໍຄື ອາເມຣິກາ ແລະ ຕາເວັນຕົກ ທີ່ສືບຕໍ່ນະໂຍບາຍປິດລ້ອມທຸກດ້ານ ຕໍ່ກັບກູບາ. ພ້ອມນັ້ນ, ສະຫາຍ ມິເກວ ເດຍສ ຄາເນວ ກໍໄດ້ເນັ້ນໜັກໃຫ້ບັນດາສະມາຊິກຄະນະບໍລິຫານງານສູນກາງພັກ ເອົາໃຈໃສ່ວຽກງານການເມືອງ-ແນວຄິດ ໃຫ້ແກ່ ສະມາຊິກພັກ, ພະນັກງານ ໃຫ້ກຳໄດ້ ອຸດົມການ ຂອງພັກ, ມີຈັນຍາບັນ, ມີຄຸນສົມບັດ ມີຄວາມຮັບຜິດຊອບສູງຕໍ່ພັກ ລັດ ເພື່ອພ້ອມກັນເສີມຂະຫຍາຍກຳລັງແຮງຂອງສະຫະພັນຊາວໜຸ່ມກອມມູນິດກູບາ ກໍຄື ຕໍ່ການສ້າງສາພັດທະນາກູບາ ໃຫ້ມີບາດກ້າວໃໝ່ທີ່ເຂັ້ມແຂງກວ່າເກົ່າ.

## 2. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1) ພາກພື້ນອາຊີ-ປາຊີຟິກ ແລະ ອາຟຣິກາ

**ຂໍ້ຂັດແຍ່ງລະຫວ່າງໄທ-ກຳປູເຈຍ:** ໃນວັນທີ 23 ກໍລະກົດ 2025, ກຳປູເຈຍ ໄດ້ວາງລະເບີດຝັງດິນ (ມິ່ນ) ຕາມເຂດຊາຍແດນລະຫວ່າງໄທ-ກຳປູເຈຍ ເຮັດໃຫ້ທະຫານໄທທີ່ອອກລາດຕະເວນ ໄດ້ຢຽບລະເບີດດັ່ງກ່າວ ເຮັດໃຫ້ມີຜູ້ຮັບບາດເຈັບ 05 ຄົນ ຕໍ່ມາວັນທີ 24 ກໍລະກົດ 2025, ທະຫານກຳປູເຈຍ ແລະ ໄທ ໄດ້ປະທະກັນ 06 ຈຸດ ໃກ້ຊາຍແດນ ເລີ່ມຈາກແຂວງສຸຣິນ ມາໃສ່ ຍິງໃສ່ຮ້ານສະດວກຊື້ ເຊເວັນ ໃນປ້ຳນ້ຳມັນ ແຂວງສີສະເກດ; ອຸບົນລາຊະທານີ, ບູຣີຣຳ. ຕາມການລາຍງານໃນວັນທີ 25 ກໍລະກົດ 2025, ມີປະຊາຊົນໄທ ເສຍຊີວິດ 14 ຄົນ, ບາດເຈັບ 32 ຄົນ; ທະຫານເສຍຊີວິດ 01 ຄົນ, ບາດເຈັບ 14 ຄົນ. ຂະນະທີ່, ກອງທັບໄທ ໄດ້ສົ່ງເຄື່ອງບິນຂັບໄລ່ F-16 ຈຳນວນ 06 ລຳ ຖິ້ມລະເບີດໃສ່ຖານທັບຂອງກຳປູເຈຍ ເຮັດໃຫ້ທະຫານກຳປູເຈຍ ຕ້ອງໜີລີບໄພ; ໄດ້ທຳລາຍລົດຖັງກຳປູເຈຍໄດ້ 02 ຄັນ ແລະ ຍຶດຄືນພື້ນທີ່ ຄວາມຂັດແຍ່ງທີ່ກຳປູເຈຍອ້າງວ່າຍຶດໄດ້ໃນຕອນເຊົ້າທີ 24 ກໍລະກົດ 2025. ຄວາມຂັດແຍ່ງຄັ້ງນີ້ ທັງໄທ ແລະ ກຳປູເຈຍ ຕ່າງກໍອ້າງວ່າອີກຝ່າຍເປັນຜູ້ເລີ່ມໂຈມຕີກ່ອນ. ຫຼາຍປະເທດກໍໄດ້ສະແດງຄວາມເປັນຫ່ວງຕໍ່ສະຖານະການທີ່ເກີດຂຶ້ນ ໂດຍສະເພາະແມ່ນບັນດາປະເທດສະມາຊິກອາຊຽນ. ໃນນັ້ນໂຄສົກກະຊວງການຕ່າງປະເທດຂອງລາວ ໄດ້ອອກຖະແຫຼງການ: ສປປ ລາວ ໃນຖານະທີ່ເປັນບ້ານໃກ້ເຮືອນຄຽງ ທີ່ມີເສັ້ນຊາຍແດນຕິດຈອດກັນ ແລະ ມີສາຍພົວພັນທີ່ດີກັບ ກຳປູເຈຍ ແລະ ໄທ, ສະແດງຄວາມເປັນຫວ່າງຢ່າງຍິ່ງ ຕໍ່ກັບສະພາບການທີ່ເກີດຂຶ້ນຕາມບໍລິເວນຊາຍແດນ ກຳປູເຈຍ-ໄທ. ສະເໜີໃຫ້ທັງສອງຝ່າຍ ໃຊ້ຄວາມພະຍາຍາມ ໃນການອົດກັ້ນ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນ ດ້ວຍສັນຕິວິທີ.

ມາເລເຊຍ ໃນນາມເປັນປະທານອາຊຽນ ປີ 2025 ກໍໄດ້ສະເໜີເປັນໃຈກາງໃນການເຈລະຈາຢຸດຍິງສອງຝ່າຍ ແລະ ໃນວັນທີ 28 ກໍລະກົດ 2025, ມາເລເຊຍ ໄດ້ເປັນເຈົ້າພາບຈັດການພົບປະ ລະຫວ່າງຜູ້ແທນໄທ ແລະ ກຳປູເຈຍ ໂດຍມີຜູ້ແທນຈາກ ສປ ຈີນ ແລະ ສ.ອາເມຣິກາ ເຂົ້າຮ່ວມເປັນສັກຂີພະຍານ, ສອງຝ່າຍ ຕົກລົງໃຫ້ມີການຢຸດຍິງໂດຍບໍ່ມີເງື່ອນໄຂ ມີຜົນບັງຄັບໃຊ້ນັບແຕ່ທ່ຽງຄືນ 28 ກໍລະກົດ 2025 ເປັນຕົ້ນໄປ. ການພົບປະດັ່ງກ່າວມີຂຶ້ນ ພາຍຫຼັງທ່ານ ໂດນັນ ທຣຳ, ປະທານາທິບໍດີ ສ.ອາເມຣິກາ ໄດ້ລົມໂທລະສັບກັບ ນາຍົກລັດຖະມົນຕີກຳປູເຈຍ ແລະ ຮັກສາການ ນາຍົກລັດຖະມົນຕີໄທ ເພື່ອຮຽກຮ້ອງໃຫ້ ສອງຝ່າຍຢຸດຍິງ, ບໍ່ດັ່ງນັ້ນ ສ.ອາເມຣິກາ ຈະບໍ່ເຈລະຈາພາສີການຄ້າກັບສອງຝ່າຍ. ແຕ່ພາຍຫຼັງຜົນສຳເລັດຂອງການເຈລະຈາ, ທ່ານ ທຣຳ ໄດ້ຕົກລົງເກັບພາສີນຳເຂົ້າສິນຄ້າຈາກໄທ, ກຳປູເຈຍ ແລະ ມາເລເຊຍພຽງ 19% ຈາກກ່ອນໜ້ານີ້ສູງເຖິງ 30 ກວ່າເປີເຊັນ.

ແນວໃດກໍຕາມ, ກ່ອນທ່ຽງຄືນຂອງວັນທີ 28 ກໍລະກົດ 2025 ກ່ອນຈະຢຸດຍິງຈົນຮອດຕອນເຊົ້າວັນທີ 29 ກໍລະກົດ 2025 ສອງຝ່າຍໄດ້ປະທະກັນຕາມຊາຍແດນ ພື້ນທີ່ປາສາດຕາຄວາຍ, ພູໝາກເຂືອ, ຊ່ອງອານໝ້າ, ຊຳແຕ, ປາສາດຕາເໝືອນທົງ ແລະ ພື້ນທີ່ຊ່ອງບົກ, ຊຶ່ງຕ່າງຝ່າຍຕ່າງອ້າງວ່າ ອີກຝ່າຍລະເມີດຂໍ້ຕົກລົງຢຸດຍິງ.

ຈາກຄວາມບໍ່ເອກະພາບດັ່ງກ່າວ, ມາເລເຊຍ ໃນນາມປະເທດປະທານອາຊຽນ ໄດ້ແຕ່ງຕັ້ງທູດທະຫານ ຕິດຕາມ 02 ສອງຝ່າຍ ເພື່ອສັງເກດການ ແລະ ກວດສອບ ຕາມເຂດຊາຍແດນ ລະຫວ່າງ ໄທ-ກຳປູເຈຍ ຊຶ່ງເລີ່ມປະຕິບັດ ໃນວັນທີ 30 ກໍລະກົດ ເປັນຕົ້ນໄປ.

**ການເມືອງຍີ່ປຸ່ນ** ວັນທີ 20 ກໍລະກົດ 2025, ຍີ່ປຸ່ນໄດ້ສຳເລັດການເລືອກຕັ້ງສະມາຊິກສະພາສູງ ຄັ້ງທີ 37 ເພື່ອຍາດເອົາ 125 ບ່ອນນັ່ງ (ເຄິ່ງຫນຶ່ງ ຂອງສະມາຊິກສະພາສູງ ຈຳນວນ 248 ບ່ອນນັ່ງ); ອາຍຸການ ຂອງສະມາຊິກສະພາສູງຍີ່ປຸ່ນ ແມ່ນ 06 ປີ, ແຕ່ທຸກໆ 03 ປີ, ຈຳນວນເຄິ່ງໜຶ່ງ ສະມາຊິກສະພາ ຈະຕ້ອງໄດ້ເລືອກຕັ້ງຄືນ;

- ສອງພັກທີ່ຮ່ວມລັດຖະບານນຳກັນ ຄື: ພັກເສລີປະຊາທິປະໄຕ (LDP) ແລະ ພັກໂຄເມໂຕະ (KOMEITO) ສາມາດຍາດໄດ້ພຽງ 47 ບ່ອນນັ່ງ ຈາກທີ່ຕັ້ງເປົ້າໝາຍໄວ້ 50 ບ່ອນນັ່ງ, ເມື່ອລວມກັບບ່ອນນັ່ງເກົ່າທີ່ມີແລ້ວ ຈະໄດ້ພຽງ 122 ບ່ອນນັ່ງ, ບໍ່ຮອດເຄິ່ງໜຶ່ງ ຂອງ ສະມາຊິກສະພາສູງທັງໝົດ (ຫຼຸດລົງ 24 ບ່ອນນັ່ງ ຖ້າທຽບໃສ່ການເລືອກຕັ້ງປີ 2022)
- ທ່ານ ຊິກິຣຸ ອິຊິບະ (Shigeru Ishiba), ປະທານພັກເສລີປະຊາທິປະໄຕ ແລະ ນາຍົກລັດຖະມົນຕີຍີ່ປຸ່ນ ໄດ້ກ່າວວ່າ ຈະດຳລົງຕຳແໜ່ງເປັນ ນາຍົກລັດຖະມົນຕີ ແລະ ຫົວຫນ້າພັກ ຕໍ່ໄປ.

<u>ສາເຫດ ທີ່ເຮັດໃຫ້ພັກ ຂອງລັດຖະບານເສຍຄະແນນ:</u>

(1) ມາຈາກຄວາມບໍ່ພໍໃຈຕໍ່ບັນຫາເສດຖະກິດ,ໂດຍສະເພາະລາຄາສິນຄ້າທ້ອງຕະຫຼາດທີ່ສູງຂຶ້ນ ແຕ່ລາຍຮັບ ຂອງປະຊາຊົນຍັງຄືເກົ່າ; ມາດຕະການ ຂອງລັດຖະບານຕ້ານໄພເງິນເຟີ້ ບໍ່ມີປະສິດທິພາບ; ການຮຽກຮ້ອງຂອງຝ່າຍຄ້ານໃຫ້ຫຼຸດຜ່ອນພາສີການບໍລິໂພກ ໄດ້ຮັບການຕອບຮັບຈາກ ປະຊາຊົນຫຼາຍກ່ວາ ການແຈກເງິນສົດຈາກພັກຮ່ວມລັດຖະບານ ບວກກັບການລົ້ມເຫຼວ ຂອງລັດຖະບານ ໃນການເຈລະຈາຫຼຸດອັດຕາພາສີສິນຄ້າຍີ່ປຸ່ນເຂົ້າ ສ.ອາເມຣິກາ. ສະແດງວ່າ ປະຊາຊົນ ຕ້ອງການຮັບການບັນເທົາພາລະທາງເສດຖະກິດຢ່າງເປັນລະບົບໃຫ້ຫຼາຍຂຶ້ນ.
(2) ບັນຫາສໍ້ລາດບັງຫຼວງໃນກອງທຶນດ້ານການເມືອງທີ່ຜ່ານມາ ໂດຍສະເພາະການປະຕິບັດວິໄນຕໍ່ຜູ້ກະທຳຜິດ ຂອງພັກ LDP ແລະ KOMEITO ບໍ່ເຂັ້ມງວດ.

**2) ພາກພື້ນເອີຣົບ-ອາເມຣິກາ**

**ບັນຫາອູແກຣນ-ຣັດເຊຍ:** ຣັດເຊຍສືບຕໍ່ໂຈມຕີທາງອາກາດໃສ່ອູແກຣນ ໂດຍສະເພາະ ທາງພາກຕາເວັນອອກຂອງອູແກຣນ ໃນຂະນະທີ່ອູແກຣນ ໄດ້ຮຽກຮ້ອງ ລະບົບປ້ອງກັນໄພທາງອາກາດ ແລະ ລູກສອນໄຟ ໄລຍະໄກ ທີ່ມີຄວາມສາມາດທຳລາຍລ້າງສູງ ເພື່ອໂຈມຕີດິນແດນ ຂອງຣັດເຊຍ ແລະ ໃນວັນທີ 14 ກໍລະກົດ 2025, ປະທານາ ທິບໍດີ ທຣຳ ໄດ້ປະກາດສົ່ງອາວຸດໃຫ້ອູແກຣນຮອບໃໝ່ ໂດຍອ້າງວ່າ ເພື່ອໃຫ້ອູແກຣນ ໃຊ້ອາວຸດດັ່ງກ່າວ ປ້ອງກັນຕົນເອງ. ຕໍ່ເຫດການດັ່ງກ່າວ, ສປ ຈີນ ກ່າວວ່າ ຈະບໍ່ມີຜູ້ຊະນະໃນສົງຄາມ ແລະ ຈີນ ຫວັງວ່າ ທຸກຝ່າຍຈະເຮັດວຽກຮ່ວມກັນ ເພື່ອສົ່ງເສີມສັນຕິພາບ ໃນອູແກຣນ.

ສ່ວນສະຫະພາບເອີຣົບ ໄດ້ມີມະຕິຕົກລົງໃນວັນທີ 18 ກໍລະກົດ 2025 ຂວ້ຳບາດ ຄັ້ງທີ 18 ຕໍ່ຣັດເຊຍ ໂດຍການຈຳກັດເພດານການຂາຍນ້ຳມັນດິບ ຂອງຣັດເຊຍ ໃຫ້ປະເທດຕ່າງໆ ໃຫ້ຕ່ຳກວ່າລາຄາຕະຫຼາດ, ຊຶ່ງປົກກະຕິແລ້ວ ກຸ່ມ G7 ໄດ້ກຳນົດຢູ່ທີ່ 60 ໂດລາສະຫະລັດ ຕໍ່ ບາເຣວລ໌ (ໃນປີ 2022) ແຕ່ຄັ້ງນີ້ ກຳນົດລາຄາ ຢູ່ທີ່ 44.7 ໂດລາສະຫະລັດຕໍ່ ບາເຣວລ໌. ຍັງມີມາດຕະການຫ້າມນຳໃຊ້ທໍ່ສົ່ງແກັດສ Nord Sream 01-02, ຫ້າມບໍ່ໃຫ້ຣັດເຊຍ ເປີດໂຮງກັ່ນນ້ຳມັນ ຂອງຣັດເຊຍ ທີ່ມີຢູ່ຕ່າງປະເທດ ຫ້າມເຮືອຂົນສົ່ງສິນຄ້າຕ່າງໆທີ່ລັກລອບຂົນນ້ຳມັນຈາກຣັດເຊຍ ໄປຈຳໜ່າຍໃນບັນດາປະເທດ ໃນທະເລບານທິກ.

ຣັດເຊຍ ກໍເປີດປະຕິບັດການໂຈມຕີໂຄງສ້າງພື້ນຖານອຸດສາຫະກຳທາງການທະຫານ ຂອງອູແກຣນ ໂດຍສະເພາະຄັງເກັບລູກສອນໄຟ ແພດທິອອດ ຂອງສ.ອາເມຣິກາ ທີ່ມອບໃຫ້ອູແກຣນ. ຂະນະທີ່, ລັດຖະມົນຕີກະຊວງປ້ອງກັນປະເທດເຢຍລະມັນ ກ່າວວ່າ ໃນໄລຍະນີ້ຈະບໍ່ສາມາດສົ່ງລະບົບປ້ອງກັນໄພທາງອາກາດ ແພດທິອອດ ແລະ ລູກສອນໄຟ ທໍຣັດ ໃຫ້ອູແກຣນ ຕາມທີ່ເຄີຍປະກາດໄວ້ ເນື່ອງຈາກອາວຸດດັ່ງກ່າວ ມີຈຳນວນຈຳກັດ ແລະ ຕ້ອງສະຫງວນໄວ້ ເພື່ອຄວາມໝັ້ນຄົງ ຂອງປະເທດ.

**ສ.ອາເມຣິກາ ປະກາດອັດຕາພາສີພື້ນຖານກັບບັນດາປະເທດຄູ່ຄ້າ:** ໃນວັນທີ 28 ກໍລະກົດ 2025, ທ່ານ ໂດນັນ ທຣຳ, ປະທານາທິບໍດີ ສ.ອາເມຣິກາ ຈະກຳນົດອັດຕາພາສີພື້ນຖານ ລະຫວ່າງ 15% ຫາ 20% ສຳລັບສິນຄ້ານຳເຂົ້າ ຂອງສ.ອາເມຣິກາ ຈາກບັນດາປະເທດທີ່ບໍ່ມີຂໍ້ຕົກລົງການຄ້າສອງຝ່າຍກັບ ສ.ອາເມຣິກາ ຊຶ່ງຈະມີຜົນແຕ່ວັນທີ

01 ສິງຫາ 2025 ເປັນຕົ້ນໄປ. ສຳລັບປະເທດຍີ່ປຸ່ນ, ສ.ເກົາຫຼີ ແລະ ສະຫະພາບເອີຣົບ ໄດ້ຕົກລົງອັດຕາພາສີ 15%; ສ່ວນກຳປູເຈຍ, ມາເລເຊຍ ແລະ ໄທ ຕົກລົງອັດຕາສີ 19%. ແຕ່ບາງປະເທດ ເຊັ່ນ: ບຣາຊິນ ແລະ ສປປ ລາວ ໄດ້ຮັບອັດຕາພາສີສູງເຖິງ 40% ແລະ 50% ແລະ ຈະເກັບພາສີນຳເຂົ້າສິນຄ້າຈາກອິນເດຍ 25% ເນື່ອງຈາກອິນເດຍຊື້ອາວຸຍຸດໂທປະກອນ ແລະ ພະລັງງານສ່ວນໃຫຍ່ຈາກຣັດເຊຍ. ສ່ວນການຄ້າກັບ ສປ ຈີນ, ຍັງເປີດໂອກາດໃຫ້ເກີດການເຈລະຈາຕື່ມອີກ 90 ວັນ ເພື່ອເປັນການປູທາງໃຫ້ ທ່ານ ທຣຳ ພົບປະກັບ ທ່ານ ສີ ຈິ້ນຜິງ, ປະທານປະເທດ ແຫ່ງ ສປ ຈີນ ໃນທ້າຍປີ 2025 ນີ້.

**3) ພາກພື້ນຕາເວັນອອກກາງ**

**ສະພາບການ ໃນເຂດກາຊາ**: ໃນວັນທີ 15 ກໍລະກົດ 2025, ກອງທັບອິດສະຣາແອນ ອອກຄຳສັ່ງຮອບໃໝ່ຮຽກຮ້ອງໃຫ້ປະຊາຊົນປາແລັດສະຕິນ ອົບພະຍົບໄປໃນເມືອງ ຄານຢູນິດ ທາງພາກໃຕ້ ຂອງເຂດກາຊາ ເຊິ່ງ ອິດສະຣາແອນ ກຳນົດໃຫ້ເປັນບ່ອນລີ້ໄພ ຂະນະດຽວກັນ ກອງທັບອິດສະຣາແອນ ກຳລັງເຄື່ອນທັບໄປຍັງເຂດພາກຕາເວັນຕົກ ເພື່ອເຂົ້າໄປໃນໃຈກາງ ຂອງເຂດກາຊາ ເພື່ອໂຈມຕີໃສ່ທຸກພື້ນທີ່ຂອງເຂດດັ່ງກ່າວ ໂດຍອ້າງວ່າ ກຸ່ມຮາມາສ ຍັງລົບລີ້ຢູ່ຕາມອຸໂມງໃຕ້ດິນຕ່າງໆ, ນອກຈາກນັ້ນ ປະຊາຊົນ ໃນທຸກພາກຂອງກາຊາ ທີ່ໄປລໍຖ້າຮັບການຊ່ວຍເຫຼືອດ້ານມະນຸດຊະທຳ ກໍຖືກ ອິດສະຣາແອນ ໂຈມຕີ ແລະ ຍິງໃສ່ ໂດຍສະເພາະ ໃນເມືອງ ຄານຢູນິດ ທາງຕອນໃຕ້ ຂອງເຂດກາຊາ.

ສຳນັກງານສິດທິມະນຸດ ຂອງ ສປຊ ໄດ້ລາຍງານວ່າ ປະຊາຊົນ ປາແລັດສະຕິນຖືກສັງຫານ ໃນເວລາຮັບອາຫານ ຫຼາຍກວ່າ 800 ຄົນ ໄລຍະ 06 ອາທິດຜ່ານມາ ແລະ ມີຜູ້ເສຍຊີວິດ ຍ້ອນພາວະອຶດຫິວ ນັບແຕ່ຄວາມຂັດແຍ່ງເກີດຂຶ້ນ ມີ 113 ຄົນ. ບັນດາອົງກອນ ແລະ ໜ່ວຍການຊ່ວຍເຫຼືອດ້ານມະນຸດສະທຳ ຫຼາຍກວ່າ 100 ແຫ່ງຮຽກຮ້ອງໃຫ້ ອິດສະຣາແອນ ຢຸດຍິງ ແລະ ເປີດໂອກາດໃຫ້ບັນດາລົດບັນທຶກເຄື່ອງຊ່ວຍເຫຼືອ ກວ່າ 950 ຄັນ ທີ່ລໍຖ້າຕາມເຂດຊາຍແດນ ເພື່ອເຂົ້າໄປໃຫ້ການຊ່ວຍເຫຼືອປະຊາຊົນ ໃນເຂດກາຊາ ແຕ່ບໍ່ໄດ້ຮັບການອະນຸຍາດຈາກອິດສະຣາແອນ ໂດຍອ້າງວ່າ ກຸ່ມຮາມາສ ຈະໄດ້ຮັບການຊ່ວຍເຫຼືອດັ່ງກ່າວ.

ນອກຈາກການໂຈມຕີເຂດກາຊາ ແລ້ວ, ອິດສະຣາແອນ ຍັງໄດ້ໂຈມຈໍຕີ ກັບກຳລັງຂອງລັດຖະບານຊີຣີ ໃນເຂດພາກໃຕ້ ຂອງຊີຣີ ໂດຍອ້າງວ່າ ເພື່ອປົກປ້ອງ ກຸ່ມຕິດອາວຸດ ດຣູດ (Druze: ກຸ່ມທີ່ສະໜັບສະໜູນລັດຖະບານຂອງ ທ່ານ ບາຊາ ອາວອາຊາດ) ທີ່ກຳລັງປະທະກັບ ກອງກຳລັງຂອງຝ່າຍລັດຖະບານ ຊີຣີ ໃນອາທິດຜ່ານມາ ເຮັດໃຫ້ມີຜູ້ເສຍຊີວິດ ປະມານ 250 ຄົນ. ອິດສະຣາແອນ ໄດ້ເຕືອນ ໃຫ້ລັດຖະບານຊີຣີ ຢຸດການໂຈມຕີກຸ່ມ ດຣູດ ຖ້າບໍ່ດັ່ງນັ້ນ ອິດສະຣາແອນ ຈະໂຈມຕີ ຊີຣີ ຮຸນແຮງກວ່າເກົ່າ. ຄວາມຈິງແລ້ວ, ທາງພາກໃຕ້ຂອງຊີຣີ ເປັນເຂດທີ່ເປັນທີ່ຕັ້ງຂອງ ພູພຽງ ໂກລັນ ທີ່ ອິດສະຣາແອນ ຍຶດຈາກຊີຣີ ແລະ ບໍ່ຢາກໃຫ້ລັດຖະບານ ຊີຣີ ມາຍຶດຄືນ.

ຄຽງຄູ່ກັບສະຖານະການຕ່າງໆ, ອິດສະຣາແອນ ກໍປະເຊີນກັບບັນຫາພາຍໃນ ໂດຍ ໃນວັນທີ 15 ກໍລະກົດ 2025, ສະມາຊິກພັກສາດສະໜາ ຢູໄນເຕັດ ໂຕຣາ ຈູດາອິດຊຶມ (United Torah Judaism - UTJ) 6 ທ່ານ ເຊິ່ງເປັນພັກຮ່ວມລັດຖະບານ ກັບ ທ່ານ ເບັນຈາມິນ ເນທັນຢາຮູ ຂອງອິດສະຣາແອນ ໄດ້ຍື່ນໜັງສືລາອອກຈາກຕຳແໜ່ງໃນຄະນະກຳມະການລັດຖະສະພາ ແລະ ຄະນະລັດຖະມົນຕີຂອງລັດຖະບານອິດສະຣາແອນ ຍ້ອນ ບໍ່ພໍໃຈ ທີ່ລັດຖະບານ ອອກກົດໝາຍເກນທະຫານ ທີ່ບໍ່ຍົກເວັ້ນໃຫ້ກຸ່ມ Ultra Orthodox ທີ່ເຄີຍໄດ້ຮັບສິດຍົກເວັ້ນການເກນທະຫານ ມາຕັ້ງແຕ່ສ້າງຕັ້ງເປັນລັດ ອິດສະຣາແອນ ເຮັດໃຫ້ ລັດຖະບານ ຍັງມີສຽງໃນ ສະພາ ພຽງ 61 ສຽງ ຈາກທັງໝົດ 120 ສຽງ.

## II. ການເຄື່ອນໄຫວຂອງການນຳການຂັ້ນສູງຂອງພັກ ປະຊາຊົນ ປະຕິວັດລາວ

### 1) ຊຸດຝຶກອົບຮົມຫົວຂໍ້ສະເພາະ ສຳລັບພະນັກງານການນຳໜຸ່ມ ບັນດາແຂວງທີ່ມີຊາຍແດນຕິດຈອດ ລາວ-ຫວຽດນາມ-ກຳປູເຈຍ






ອີງຕາມ ການຕົກລົງຂອງການນຳສູງສຸດ ໃນກອງປະຊຸມພົບປະຂອງ 3 ພັກ-ລັດຖະບານ ລາວ-ຫວຽດນາມ-ກຳປູເຈຍ ຄັ້ງວັນທີ 25 ກັນຍາ 2021 ຢູ່ ນະຄອນຫຼວງຮ່າໂນ້ຍ ສສ ຫວຽດນາມ. ໃນຕອນເຊົ້າຂອງວັນທີ 8 ກໍລະກົດ 2025, ທີ່ນະຄອນຫຼວງວຽງຈັນ, ຄະນະຈັດຕັ້ງສູນກາງພັກ ຮ່ວມກັບ ຄະນະພົວພັນຕ່າງປະເທດສູນກາງພັກ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ຄະນະໂຄສະນາອົບຮົມສູນກາງພັກ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງປ້ອງກັນປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງລາວ ໄດ້ພ້ອມກັນຈັດພິທີເປີດ ຊຸດຝຶກອົບຮົມຫົວຂໍ້ສະເພາະ ສຳລັບພະນັກງານການນຳໜຸ່ມ ບັນດາແຂວງທີ່ມີຊາຍແດນຕິດຈອດ ລາວ-ຫວຽດນາມ-ກຳປູເຈຍ ຄັ້ງທີ 3, ໂດຍການໃຫ້ກຽດເຂົ້າຮ່ວມເປັນປະທານ ແລະ ກ່າວເປີດ ຂອງ ສະຫາຍ ນາງ ສີໃສ ລືເດດມູນສອນ, ກຳມະການກົມການເມືອງສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ ແລະ ມີສະຫາຍຄະນະນຳ, ບັນດາຫົວໜ້າກົມ, ຮອງຫົວໜ້າກົມ ແລະ ບັນດາຜູ້ຕາງໜ້າຈາກ ພາກສ່ວນກ່ຽວຂ້ອງ ພ້ອມທັງນັກສຳມະນາກອນຂອງ 3 ພັກ ລາວ-ຫວຽດນາມ-ກຳປູເຈຍ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ ສະຫາຍ ປອ ດາວສະຫວັນ ເຄືອມີໄຊ, ຮອງຫົວໜ້າສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ໄດ້ຂຶ້ນລາຍງານ ກ່ຽວກັບ ແຜນການຝຶກອົບຮົມຄັ້ງນີ້ ເຊິ່ງໃຊ້ເວລາ 8 ວັນ, ແຕ່ວັນທີ 8-15 ກໍລະກົດ 2025, ໂດຍມີຜູ້ເຂົ້າຮ່ວມຈາກ ລາວ ຈຳນວນ 20 ສະຫາຍ, ຫວຽດນາມ 12 ສະຫາຍ ແລະ ກຳປູເຈຍ 15 ສະຫາຍ, ລວມທັງໝົດ 47 ສະຫາຍ (ຍິງ 3 ສະຫາຍ). ບັນດາສຳມະນາກອນຂອງ 3 ປະເທດ ໄດ້ແລກປ່ຽນບົດຮຽນໃນການພັດທະນາເສດຖະກິດ-ສັງຄົມ ຂອງແຕ່ລະພັກ, ແຕ່ລະປະເທດ; ໂດຍຈະລົງເລິກແລກປ່ຽນ 6 ຫົວຂໍ້ສຳຄັນຄື: 1) ບົດບາດຂອງ ພັກປະຊາຊົນ ປະຕິວັດລາວ ໃນເອຫີສາກົນ; 2) ການພົວພັນທີ່ເປັນມູນເຊື້ອ ລາວ-ຫວຽດນາມ-ກຳປູເຈຍ; 3) ການກໍ່ສ້າງ ແລະ ປ້ອງກັນຊາຍແດນມິດຕະພາບ, ສັນຕິພາບ ແລະ ການຮ່ວມມື ຂອງ 3 ປະເທດ; 4) ຍຸດທະສາດການພັດທະນາເສດຖະກິດ-ການຄ້າ ຂອງ 3 ປະເທດ ໃນສະພາບການເຊື່ອມໂຍງພາກພື້ນ ແລະ ສາກົນ; 5) ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ໃນສະພາບການເຊື່ອມໂຍງສາກົນ; 6) ການຮ່ວມມືດ້ານການທ່ອງທ່ຽວ ແລະ ວັດທະນະທຳຂອງ 3 ປະເທດ. ນອກນີ້, ສຳມະນາກອນ ຍັງໄດ້ໄປທັດສະນະສຶກສາ ແລະ ຢ້ຽມຢາມສະຖານທີ່ປະຫວັດສາດ ແລະ ພື້ນຖານການຜະລິດສຳຄັນຈຳນວນໜຶ່ງຢູ່ ນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ.

ໃນໂອກາດດັ່ງກ່າວ, ບັນດາສຳມະນາກອນໃນຊຸດຝຶກອົບຮົມຄັ້ງນີ້ ໄດ້ເຂົ້າຢ້ຽມຂໍ່ານັບການນຳຂັ້ນສູງຂອງພັກ ປປ ລາວ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປປ ລາວ; ສະຫາຍ ອາດສະພັງທອງ ສີພັນດອນ, ກຳມະການສູນກາງພັກ, ເຈົ້າຄອງນະຄອນຫຼວງວຽງຈັນ; ໂດຍການນຳຂັ້ນສູງດັ່ງກ່າວ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງ ຕໍ່ຜົນສຳເລັດໃນການຝຶກອົບຮົມຫົວຂໍ້ສະເພາະ ສຳລັບພະນັກງານການນຳໜຸ່ມ 3 ພັກ ລາວ-ຫວຽດ ນາມ-ກຳປູເຈຍ ທີ່ຈັດຂຶ້ນເປັນ ຄັ້ງທີ III, ເຊິ່ງຄັ້ງນີ້ແມ່ນ ພັກ ປປ ລາວ ເປັນເຈົ້າພາບ, ເປັນການຈັດຕັ້ງປະຕິບັດຕາມເນື້ອໃນຈິດໃຈຜົນການພົບປະຜູ້ນຳ 3 ພັກ ລາວ-ຫວຽດນາມ-ກຳປູເຈຍ, ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ ນັກສຳມະນາກອນທັງ 3 ປະເທດ ທີ່ໄດ້ເອົາໃຈໃສ່ແລກປ່ຽນປະກອບຄຳຄິດເຫັນຢ່າງສ້າງສັນ ແລະ ກົງໄປກົງມາ, ໂດຍສະເພາະ ແລກປ່ຽນບົດຮຽນໃນການພັດທະນາເສດຖະກິດ-ສັງຄົມ, ການທ່ອງທ່ຽວ,

ວັດທະນະທຳ ແລະ ອື່ນໆ ຂອງແຕ່ລະພັກ, ແຕ່ລະປະເທດ ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ ຂອງແຕ່ລະປະເທດ ກໍຄື ການຮັດແໜ້ນສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ຄວາມສາມັກຄີພິເສດ ແລະ ການພົວພັນຮ່ວມມືຮອບດ້ານຂອງ 3 ພັກ ແລະ ປະຊາຊົນ 3 ຊາດ ລາວ-ຫວຽດນາມ-ກຳປູເຈຍ ໃຫ້ນັບມື້ໄດ້ຮັບການເສີມຂະຫຍາຍ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

## III. ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ.

### 1) ຮັກສາການ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບ ຄະນະຜູ້ແທນ ກະຊວງການຕ່າງປະເທດ ຫວຽດນາມ





ໃນຕອນເຊົ້າຂອງວັນທີ 9 ກໍລະກົດ 2025, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ພ້ອມດ້ວຍ ພະນັກງານຫຼັກແຫຼ່ງຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າພົບປະຂອງ ສະຫາຍ ຫງວຽນແມັ້ງເກືອງ, ກຳມະການສູນກາງພັກ, ຮອງລັດຖະມົນຕີ ກະຊວງການຕ່າງປະເທດຫວຽດນາມ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ ໃນລະຫວ່າງວັນທີ 8-9 ກໍລະກົດ 2025.

ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ຕີລາຄາສູງຕໍ່ການຢ້ຽມຢາມເຮັດວຽກ ແລະ ເປັນປະທານຮ່ວມ ກອງປະຊຸມປຶກສາຫາລືດ້ານການເມືອງ ຂັ້ນຮອງລັດຖະມົນຕີ ຄັ້ງທີ 10 ລະຫວ່າງ ກະຊວງການຕ່າງປະເທດ ສປປ ລາວ ແລະ ສສ ຫວຽດນາມ ຂອງ ສະຫາຍ ຫງວຽນແມັ້ງເກືອງ, ພ້ອມທັງສະແດງຄວາມປິຕິຍິນດີທີ່ໄດ້ຕ້ອນຮັບ ຄະນະຜູ້ແທນ ມາຢ້ຽມຢາມ ຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ໃນຄັ້ງນີ້ ເຊິ່ງຈະເປັນການປະກອບສ່ວນເຂົ້າໃນການເພີ່ມພູນຄູນສ້າງ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ກໍຄື ລະຫວ່າງ ສອງອົງການ ທີ່ເຮັດໜ້າທີ່ວຽກງານພົວພັນຕ່າງປະເທດ ໃຫ້ນັບມື້ເຂົ້າສູ່ລວງເລິກ ແລະ ມີປະສິດທິຜົນໃນທຸກຂົງເຂດວຽກງານ.

ສອງຝ່າຍ ໄດ້ຮ່ວມກັນຕີລາຄາຄືນ ການພົວພັນຮ່ວມມື ລະຫວ່າງ ຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ແລະ ຄະນະພົວພັນຕ່າງປະເທດສູນກາງພັກ ກອມມູນິດຫວຽດນາມ ໃນເມື່ອກ່ອນ ກໍຄື ກະຊວງການຕ່າງປະເທດຫວຽດນາມ ໃນປະຈຸບັນ, ໂດຍໄດ້ເຫັນດີເປັນເອກະພາບ ໃນການສືບຕໍ່ຈັດຕັ້ງຜັນຂະຫຍາຍບັນດາຂໍ້ຕົກລົງຂອງການນຳຂັ້ນສູງ ສອງພັກ, ສອງລັດ ກໍຄື ທິດທາງແຜນການຮ່ວມມືໃນຕໍ່ໜ້າ ໂດຍສະເພາະແມ່ນ ການປະສານສົມທົບໃຫ້ແໜ້ນແຟ້ນ ໃນການກະກຽມໃຫ້ແກ່ການຢ້ຽມຢາມທາງການ, ການພົບປະຂອງການນຳຂັ້ນສູງ; ການຮ່ວມກັນຈັດກິດຈະກຳການເຄື່ອນໄຫວຕ່າງໆ ເພື່ອສະເຫຼີມສະ ຫຼອງວັນສຳຄັນຂອງສອງພັກ, ສອງປະເທດ; ການແລກປ່ຽນຂໍ້ມູນຂ່າວສານ, ແລກປ່ຽນຖອດຖອນບົດຮຽນ ທາງດ້ານທິດສະດີ ແລະ ພຶດຕິກຳ, ຈັດຊຸດບຳລຸງ ແລະ ຝຶກອົບຮົມ ໃຫ້ແກ່ພະນັກງານລາວຂັ້ນຕ່າງໆ; ລວມທັງການປະສານສົມທົບຕິດຕາມ, ຊຸກຍູ້ ບັນດາກະຊວງ, ອົງການ, ຂະແໜງການ ແລະ ທ້ອງຖິ່ນຂອງສອງປະເທດ ໃນການຈັດຕັ້ງຜັນຂະຫຍາຍ ບັນດາຂໍ້ຕົກລົງຂອງການນຳຂັ້ນສູງ ພັກ, ລັດ ລາວ-ຫວຽດນາມ ໃຫ້ເປັນຮູບປະທຳ.

**2) ຄະນະຜູ້ແທນພັກກອມມູນິດຈີນ ຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ**




ໂດຍປະຕິບັດຕາມແຜນການຮ່ວມມື ລະຫວ່າງ ພັກ ປປ ລາວ ແລະ ພັກກອມມູນິດຈີນ ແລະ ແຜນການຮ່ວມມື ລະຫວ່າງ ຄະນະພົວພັນຕ່າງປະເທດ ຂອງ 2 ສູນກາງພັກ ລາວ-ຈີນ ປະຈຳປີ 2025 ກໍຄືແຜນແມ່ບົດວ່າດ້ວຍ ການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ສະບັບປີ 2024-2028, ຄະນະຜູ້ແທນຂອງພັກກອມມູນິດຈີນ ນຳໂດຍ ສະຫາຍ ເສິນໂຈ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນພ້ອມດ້ວຍຄະນະ ໄດ້ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ແຕ່ວັນທີ 16-18 ກໍລະກົດ 2025.

ໂດຍໄດ້ພົບປະເຮັດວຽກກັບ ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ. ສອງຝ່າຍໄດ້ສະແດງຄວາມຊົມເຊີຍຕໍ່ການຈັດຕັ້ງປະຕິບັດແຜນແມ່ບົດ ວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ກໍຄື ການເສີມຂະຫຍາຍການພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ, ຕະຫຼອດໄລຍະຜ່ານມາ; ເຫັນດີສືບຕໍ່ຊຸກຍູ້ຈັດຕັ້ງປະຕິບັດແຜນແມ່ບົດ ວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ, ບັນດາແຜນການຮ່ວມມື ລະຫວ່າງ ສອງພັກ ແລະ ການຈັດຕັ້ງຜັນຂະຫຍາຍບັນດາເນື້ອໃນຈິດໃຈ ທີ່ການນຳສອງພັກ, ສອງລັດ ລາວ-ຈີນ ໄດ້ຕົກລົງເປັນເອກະພາບກັນ ໃຫ້ປະກົດຜົນເປັນຈິງຫຼາຍກວ່າເກົ່າ ແລະ ປຶກສາຫາລື ກ່ຽວກັບ ທິດທາງການຮ່ວມມື ລະຫວ່າງ ສອງພັກ ໃນຕໍ່ໜ້າ.

**3) ຮັກສາການ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງເອກອັກຄະລັດຖະທູດຍີ່ປຸ່ນ ປະຈຳ ສປປ ລາວ**



ໃນວັນທີ 10 ກໍລະກົດ 2025, ທ່ານ ບຸນເຫຼືອ ພັນດານຸວົງ, ຮັກສາການ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງທ່ານ ໂຄອິຊຶມິ ຊິໂຕມຸ, ເອກອັກຄະລັດຖະທູດຍີ່ປຸ່ນ ປະຈຳ ສປປ ລາວ ເພື່ອສະແດງຄວາມຊົມເຊີຍຕໍ່ ທ່ານ ບຸນເຫຼືອ ພັນດານຸວົງ ທີ່ໄດ້ຮັບຕຳແໜ່ງໃໝ່ ເປັນຮັກສາການ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ.

ໃນໂອກາດດັ່ງກ່າວ, ທ່ານ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຊົມເຊີຍ ຕໍ່ການມາຢ້ຽມຂໍ່ານັບ ຂອງທ່ານເອກອັກຄະລັດຖະທູດ ໃນຄັ້ງນີ້, ເປັນການປະກອບສ່ວນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືຍຸດທະສາດຮອບດ້ານລາວ-ຍີ່ປຸ່ນ ໃຫ້ນັບມື້ ໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ;

ທັງໄດ້ແຈ້ງໃຫ້ຝ່າຍຍີ່ປຸ່ນຊາບກ່ຽວກັບສະພາບພົ້ນເດັ່ນໃນການສ້າງສາພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ, ໂດຍສະເພາະ ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ໄລຍະທ້າຍສະໄໝຂອງພັກ, ແຜນການພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ການດຳເນີນກອງປະຊຸມໃຫ່ຍ 3 ຂັ້ນ ເພື່ອກະກຽມກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກໃນປີ 2026 ແລະ ຜົນສຳເລັດໃນດ້ານຕ່າງໆທີ່ຍາດມາໄດ້ ພາຍໃຕ້ການນຳພາຂອງພັກ ປປ ລາວ; ຕີລາຄາສູງ ຕໍ່ສາຍພົວພັນຄູ່ຮ່ວມຍຸດທະສາດຮອບດ້ານ ລາວ-ຍີ່ປຸ່ນ ທີ່ຫາກໍ່ຖືກຍົກລະດັບຂຶ້ນໃນບໍ່ດົນຜ່ານມາ ແລະ ມີຄວາມຍິນດີທີ່ຈະສືບຕໍ່ຮ່ວມມືກັບ ທ່ານທູດ ໃນການຊຸກຍູ້ເສີມຂະຫຍາຍສາຍພົວພັນດັ່ງກ່າວ ໃຫ້ງອກງາມຍິ່ງຂຶ້ນ; ສະແດງຄວາມຂອບໃຈ ຕໍ່ ລັດຖະບານ ແລະ ປະຊາຊົນຍີ່ປຸ່ນ ທີ່ໄດ້ໃຫ້ການຊ່ວຍເຫລືອ ແລະ ສະໜັບສະໜູນ ສປປ ລາວ ໃນການພັດທະນາເສດຖະກິດ-ສັງຄົມ, ພັດທະນາຊັບພະຍາກອນມະນຸດ, ການສຶກສາ, ສາທາລະນະສຸກ, ພື້ນຖານໂຄງລ່າງ, ກະສິກຳ ແລະ ປ່າໄມ້, ການເກັບກູ້ລະເບີດບໍ່ທັນແຕກ ແລະ ອື່ນໆ.

**4) ຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ຮອງລັດຖະມົນຕີຜູ້ທີໜຶ່ງ ກະຊວງການຕ່າງປະເທດ ແຫ່ງ ສ.ກູບາ**




ໃນຕອນບ່າຍ ຂອງວັນທີ 25 ກໍລະກົດ 2025, ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ສະຫາຍ ເຮຣາໂດ ເປຍາເວ ປອດຕານ (Gerardo Peñalver Portal), ຮອງລັດຖະມົນຕີຜູ້ທີໜຶ່ງ ກະຊວງການຕ່າງປະເທດ ແຫ່ງ ສ.ກູບາ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ສປປ ລາວ ແລະ ບັນດາປະເທດໃນຂົງເຂດອາຊີ.

ໃນໂອກາດນີ້, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງ ຕໍ່ການຢ້ຽມຢາມ ສປປ ລາວ ຂອງ ສະຫາຍ ເຮຣາໂດ ເປຍາເວ ປອດຕານ ໃນຄັ້ງນີ້, ຊຶ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການເພີ່ມພູນຄູນສ້າງ ສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ກູບາ ໃຫ້ແໜ້ນແຟ້ນຍິ່ງໆຂຶ້ນ; ພ້ອມທັງໄດ້ສະແດງຄວາມຂອບໃຈຢ່າງຈິງໃຈ ຕໍ່ການສະໜັບສະໜູນ ແລະ ຊ່ວຍເຫຼືອຂອງພັກ, ລັດ ແລະ ປະຊາຊົນກູບາອ້າຍນ້ອງ ໃນພາລະກິດຕໍ່ສູ້ກູ້ຊາດໃນເມື່ອກ່ອນ ກໍ່ຄື ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງ ສປປ ລາວ ໃນປັດຈຸບັນ;ສະແດງຄວາມຊົມເຊີຍ ຕໍ່ບັນດາຜົນສຳເລັດຂອງກູບາ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໂດຍສະເພາະແມ່ນການພັດທະນາເສດຖະກິດ-ສັງຄົມ ແລະ ສືບຕໍ່ປົກປັກຮັກສາໝາກຜົນຂອງການປະຕິວັດໄວ້ຢ່າງໝັ້ນຄົງ ຕະຫຼອດໄລຍະ 60 ກວ່າປີ. ພ້ອມນັ້ນ, ຍັງໄດ້ແຈ້ງໃຫ້ຊາບໂດຍຫຍໍ້ ກ່ຽວກັບສະພາບພົ້ນເດັ່ນໃນການສ້າງສາພັດທະນາເສດຖະກິດ ແລະ ສັງຄົມຂອງ ສປປ ລາວ ໃນຊຸມປີຜ່ານມາ ໂດຍສະເພາະການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ໄລຍະທ້າຍສະໄໝ.

ສອງຝ່າຍຕີລາຄາສູງຕໍ່ການພົວພັນຮ່ວມມືທີ່ເປັນມູນເຊື້ອອັນດີງາມ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ກູບາ, ຊຶ່ງສືບຕໍ່ໄດ້ຮັບການຮັດແໜ້ນ ແລະ ເສີມຂະຫຍາຍຢ່າງບໍ່ຢຸດຢັ້ງ; ພ້ອມນັ້ນ,ຍັງໄດ້ແລກປ່ຽນຄຳຄິດເຫັນຢ່າງກົງໄປກົງມາຕໍ່ການກວດກາຄືນ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງທີ່ມີຮ່ວມກັນໃນໄລຍະຜ່ານມາ ເພື່ອຊອກຫາທ່າແຮງໃນການຮ່ວມມືໃນຕໍ່ໜ້າ ໂດຍສະເພາະ ດ້ານການເມືອງ, ການສຶກສາ, ກະສິກຳ, ສາທາລະນະສຸກ ແລະ ອື່ນໆ ທີ່ສອງຝ່າຍມີຄວາມສົນໃຈຮ່ວມກັນ. ນອກຈາກນີ້, ສອງຝ່າຍຍັງເຫັນດີຈະສືບຕໍ່ໃຫ້ການສະໜັບສະໜູນຊ່ວຍເຫຼືອເຊິ່ງກັນ ແລະ ກັນ ທັງໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ.

5) ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຢ້ຽມຊົມອະນຸສອນສະຖານ ປະທານ ສຸພານຸວົງ ເນື່ອງໃນໂອກາດວັນເກີດ ຄົບຮອບ 116 ປີ (13/07/1909-13/07/2025)




ເນື່ອງໃນໂອກາດວັນເກີດ ປະທານ ສຸພານຸວົງ ຄົບຮອບ 116 ປີ (13 ກໍລະກົດ 1909 - 13 ກໍລະກົດ 2025), ໃນຕອນເຊົ້າຂອງວັນທີ 16 ກໍລະກົດ 2025, ພະນັກງານຂອງຄະນະພົວພັນຕ່າງປະເທດສູນກາງພັກ ຈຳນວນ 30 ສະຫາຍ ນຳໂດຍ ສະຫາຍ ບຸນຍອງ ບຸດທະວົງ, ຫົວໜ້າກົມການທູດປະຊາຊົນ, ຫົວໜ້າອະນຸກຳມະການໂຄສະນາ, ຂະບວນການ ແລະ ສະຖານທີ່ຂອງກອງປະຊຸມໃຫຍ່ສະມາຊິກພັກອົງຄະນະພັກຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ໄປຢ້ຽມຊົມອະນຸສອນສະຖານ ປະທານ ສຸພານຸວົງ ເພື່ອສະແດງຄວາມເຄົາລົບຮັກ, ຄວາມກະຕັນຍູຮູ້ບຸນຄຸນຕໍ່ຄຸນງາມຄວາມດີ ແລະ ຜົນງານອັນໃຫຍ່ຫຼວງຂອງ ປະທານ ສຸພານຸວົງ ທີ່ທ່ານໄດ້ອຸທິດທັງຕະຫຼອດຊີວິດຂອງຕົນ ເພື່ອພາລະກິດຕໍ່ສູ້ປົດປ່ອຍຊາດ, ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ມີຄວາມຈະເລີນຮຸ່ງເຮືອງສືບທອດເຖິງປັດຈຸບັນ. ພ້ອມນັ້ນ, ກໍເພື່ອແນໃສ່ການສຶກສາອົບຮົມ, ປູກຈິດສຳນຶກໃຫ້ພະນັກງານ-ສະມາຊິກພັກຂອງຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຄົ້ນຄວ້າເຊື່ອມຊຶມຮໍ່າຮຽນເອົາແບບຢ່າງຄຸນສົມບັດສິນທຳປະຕິວັດຂອງເພິ່ນ ເພື່ອນຳໃຊ້ເຂົ້າໃນຊີວິດຕົວຈິງ, ພ້ອມກັນນັ້ນ ທັງເປັນການສ້າງຂະບວນການຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ 3 ຂອງອົງຄະນະພັກຄະນະພົວພັນຕ່າງປະເທດສູນກາງພັກ.

ການໄປຢ້ຽມຊົມໃນຄັ້ງນີ້ ຜູ້ເຂົ້າຮ່ວມໄດ້ຮັບຟັງການບັນລະຍາຍ ກ່ຽວກັບວິລະກຳການຕໍ່ສູ້ກູ້ຊາດຂອງ ປະທານ ສຸພານຸວົງ ເຮັດໃຫ້ແຕ່ລະສະຫາຍໄດ້ຮັບຮູ້ ແລະ ເຫັນແຈ້ງຕໍ່ເຫດການຕໍ່ສູ້ທາງດ້ານການເມືອງ, ການທະຫານອັນສະຫຼາດຄ່ອງແຄ້ວຂອງ ປະທານ ສຸພານຸວົງ, ເຊິ່ງເປັນການທັດສະນະສຶກສາ, ຮຽນຮູ້ທັງເປັນການປູກຈິດສຳນຶກ, ຍົກສູງສະຕິຕໍ່ຊາດ, ການສຶກສາອົບຮົມການເມືອງແນວຄິດໃຫ້ພະນັກງານ-ສະມາຊິກພັກຂອງຄະນະ ພົວພັນຕ່າງປະເທດສູນກາງພັກ ໄດ້ກຳແໜ້ນ ແລະ ຮັບຮູ້ເຖິງປະຫວັດອັນພິລະອາດຫານ, ຄວາມເສຍສະຫຼະເພື່ອຊາດ ເພື່ອປະຊາຊົນ, ຮັກບ້ານເກີດເມືອງນອນ ແລະ ນຳເອົາບົດຮຽນທາງປະຫວັດສາດມາໝູນໃຊ້ ເຂົ້າໃນໜ້າທີ່ ວຽກງານການເມືອງຕົວຈິງຂອງຕົນ ໃຫ້ມີຜົນສຳເລັດຍິ່ງໆຂຶ້ນ.

### 6) ເນື່ອງໃນໂອກາດວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 70 ປີ (20/07/1955-20/07/2025)



ໃນຕອນບ່າຍຂອງວັນທີ 23 ກໍລະກົດ 2025, ສະຫະພັນແມ່ຍິງ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ໄປທັດສະນະສຶກສາ ແລະ ທ່ຽວຊົມ ຫໍພິພິທະພັນສິລະປະລາວ ນໍາໂດຍ ສະຫາຍ ນາງ ສຸກສະຫວັນ ແກ້ວວິໄລວັນ, ປະທານສະຫະພັນແມ່ຍິງ ຄຕພ ພ້ອມດ້ວຍສະມາຊິກ ສະຫະພັນ ແມ່ຍິງ ຄຕພ ຈໍານວນ 45 ສະຫາຍ ເຂົ້າຮ່ວມ.

ຈຸດປະສົງຂອງການໄປທັດສະນະສຶກສາ ແລະ ທ່ຽວຊົມ ຫໍພິພິທະພັນສິລະປະລາວ ໃນຄັ້ງນີ້ ແມ່ນເພື່ອເປັນການສະເຫຼີມສະຫຼອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 70 ປີ ໃຫ້ເປັນຂະບວນການຟົດຟື້ນກວ້າງຂວາງ ແລະ ເພື່ອເຮັດໃຫ້ສະມາຊິກສະຫະພັນແມ່ຍິງ ຄຕພ ໄດ້ຮຽນຮູ້ເຖິງສີໄມ້ລາຍມື ແລະ ຄຸນຄ່າຂອງຜົນງານ ໂດຍຜ່ານການແກະສະຫຼັກໄມ້ຫຼາກຫຼາຍຊະນິດທີ່ເຕັມໄປດ້ວຍຄວາມສວຍງາມ, ໜ້າສົນໃຈ ແລະ ເປັນເອກະລັກຂອງວັດທະນະທໍາລາວ. ພ້ອມນັ້ນ, ກໍຍັງເປັນສະຖານທີ່ທ່ອງທ່ຽວທີ່ເປັນການອະນຸລັກຮີດຄອງປະເພນີລາວ, ສິລະປະວັດທະນະທໍາລາວແຕ່ເໜືອເຖິງໃຕ້ ໂດຍໄດ້ຖ່າຍທອດຜ່ານການແກະສະຫຼັກລວດລາຍຕ່າງໆທີ່ມີຄວາມປານີດ ເພື່ອພ້ອມກັນປົກປັກຮັກສາມູນມໍລະດົກອັນລໍ້າຄ່ານີ້ໃຫ້ຢູ່ຄູ່ກັບຄົນລາວສືບໄປ.